ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ...125...../ນຍ

ນະຄອນວຽງຈັນ, ວັນທີ...24.07.2003

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມມະຕິຕົກລົງຂອງສະພາລັດຖະມົນຕີກ່ຽວກັບການສ້າງຕັ້ງສະພາການຄ້າເລກທີ0598/ທສລ ລົງວັນທີ 5/5/89;
- ອີງຕາມການສະເໜີ ຂອງ ລັດຖະມົນຕີ ວ່າການກະຊວງການຄ້າສະບັບເລກທີ 0714/ກຄ.ສກຄ, ລົງວັນທີ 18 ກໍລະກົດ 2003.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I
## ທີ່ຕັ້ງ ແລະ ພາລະບົດບາດ

### ມາດຕາ 1. ທີ່ຕັ້ງ

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເອີ້ນຫຍໍ້ວ່າ "ສຄອ" ແມ່ນອົງການຈັດຕັ້ງສັງຄົມຂອງນັກທຸລະກິດ, ເປັນຂົວຕໍ່ ລະຫວ່າງ ອົງການຂອງລັດ ແລະ ຫົວໜ່ວຍທຸລະກິດ, ເປັນຕົວແທນໃຫ້ແກ່ຜູ້ໃຊ້ແຮງງານ ແລະ ບັນດາສະມາຄົມ ຫຼື ກຸ່ມນັກທຸລະກິດ, ບັນດາຫົວໜ່ວຍທຸລະກິດຕ່າງໆ ທີ່ເປັນຂອງລັດ, ລວມໝູ່, ວິສາຫະກິດປະສົມ ແລະ ວິສາຫະກິດເອກະຊົນໃນທຸກຂະແໜງການ ທີ່ສ້າງຕັ້ງຂຶ້ນ ຕາມກົດຫມາຍ ຂອງ ສ ປ ປ ລາວ.

### ມາດຕາ 2. ພາລະບົດບາດ

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ເປັນອົງການສຳພັນທາງດ້ານເສດຖະກິດຊຶ່ງມີພາລະບົດບາດ ປຸກລະດົມຂົນຂວາຍ, ຈັດຕັ້ງ, ເຕົ້າໂຮມ ແລະ ສຶກສາ ນຳພາບັນດາ ຫົວໜ່ວຍທຸລະກິດໃນການເຄື່ອນໄຫວທຸລະກິດ ໃຫ້ຖືກຕ້ອງຕາມລະບຽບ ກົດໝາຍ ແລະ ປົກ ປ້ອງສິດຜົນປະໂຫຍດອັນຊອບທຳຂອງສະມາຊິກຕົນ.

## ໝວດທີ II
## ສິດ ແລະ ໜ້າທີ່

### ມາດຕາ 3. ໜ້າທີ່

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ມີໜ້າທີ່ດັ່ງນີ້:

- ເກັບກຳ,ລວບລວມເອົາບັນດາຄວາມຄິດຄວາມເຫັນ,ຂໍ້ສະເໜີແນະຂອງພາກສ່ວນທຸລະກິດຕ່າງໆ;
- ເປັນຂົວຕໍ່ປະສານງານ ລະຫວ່າງ ບັນດາວິສາຫະກິດ ກັບ ອົງການຂອງລັດ ເພື່ອ ປຶກສາຫາລື ກ່ຽວກັບ ບັນຫາທຸລະກິດ;
- ສະເໜີຄວາມຄິດ ຄວາມເຫັນ ຕໍ່ ບັນດາອົງການຂອງລັດ ກ່ຽວກັບການອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວທຸລະກິດ, ສົ່ງເສີມການຜະລິດເພື່ອ ເປັນຂາອອກ ແລະ ຊົມໃຊ້ພາຍໃນ, ສ້າງເງື່ອນໄຂເອື້ອອຳນວຍ ໃຫ້ການຜະລິດ ຂອງ ສປປ ລາວ ສາມາດແຂ່ງຂັນໃນຕະຫຼາດສາກົນ;
- ປະກອບຄຳຄິດເຫັນ ໃສ່ຮ່າງກົດໝາຍ ແລະ ນະໂຍບາຍທາງດ້ານເສດຖະກິດ;
- ປະຕິບັດບາງວຽກງານຕາມການມອບໝາຍຂອງລັດຖະບານ ແນໃສ່ ຂະຫຍາຍການພົວພັນດ້ານເສດຖະກິດການຄ້າ ກັບ ຕ່າງປະເທດ ທີ່ມີ ຫຼື ບໍ່ມີສາຍພົວພັນທາງການທູດກັບ ສປປ ລາວ.

### ມາດຕາ 4. ສິດ

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ມີສິດດັ່ງນີ້:

- ເຈລະຈາ ກ່ຽວກັບ ການຄ້າ, ການອຸດສາຫະກຳ, ການບໍລິການ ແລະ ອື່ນໆ ກັບ ອົງການທີ່ກ່ຽວຂ້ອງຂອງ ລັດ ແລະ ກັບຕ່າງປະເທດ ຕາມການມອບໝາຍ ຂອງ ລັດຖະ ບານ;
- ອອກ ແລະ ຄຸ້ມຄອງ ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຕ່າງໆ ;
- ຮັບຮອງເອົາການສ້າງຕັ້ງສະມາຄົມ ຫຼື ກຸ່ມ ແລະ ຄະນະບໍລິຫານງານ ຂອງ ສະພາການ ຄ້າ ແລະອຸດສາຫະກຳທ້ອງຖິ່ນ;
- ແຕ່ງຕັ້ງຕົວແທນຂອງຕົນຢູ່ຕ່າງປະເທດ;
- ແຕ່ງຕັ້ງ ໃຫ້ພະນັກງານໃນອົງການຈັດຕັ້ງຂອງຕົນ ແລະ ພະນັກງານ ຂອງສະມາຄົມ ຫລື ກຸ່ມນັກທຸລະກິດຕ່າງໆ ໄປເຮັດວຽກ ຫຼື ໄປຮຽນຢູ່ຕ່າງປະເທດ;
- ໄດ້ຮັບການສະໜັບສະໜູນທາງດ້ານທຶນຮອນ ຈາກ ລັດຖະບານ, ຈາກບຸກຄົນ ແລະ ຈາກອົງການຈັດຕັ້ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ.

## ໝວດທີ III
## ໂຄງປະກອບ ການຈັດຕັ້ງ

### ມາດຕາ5. ໂຄງປະກອບການຈັດຕັ້ງ

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ປະກອບດ້ວຍ: ຄະນະບໍລິຫານງານ, ຄະນະປະຈຳ, ຄະນະກວດກາ ແລະ ຫ້ອງການເລຂາທິການ.

ກຳມະການຄະນະບໍລິຫານງານ ແລະ ຄະນະກວດກາ ຖືກເລືອກຕັ້ງຈາກກອງປະຊຸມໃຫຍ່ ຂອງສະມາຊິກ. ກຳມະການ ຂອງ ຄະນະດັ່ງກ່າວ ມີອາຍຸການ ສາມ ປີ ແລະ ສາມາດຖືກເລືອກຕັ້ງຄືນໃໝ່ໄດ້.

ກຳມະການຄະນະປະຈຳປະກອບດ້ວຍ: ປະທານ ຫລື ຮອງປະທານຄະນະບໍລິຫານງານ, ເລຂາທິການ ແລະ ກຳມະການຄະນະບໍລິຫານງານຈຳນວນໜຶ່ງ ຊຶ່ງຖືກເລືອກຕັ້ງໂດຍ ຄະນະບໍລິຫານງານ .

ເລຂາທິການຖືກແຕ່ງຕັ້ງ ໂດຍ ປະທານຄະນະບໍລິຫານງານ ບົນພື້ນຖານການສະເໜີ ຂອງຄະນະບໍລິຫານງານ.

ຄະນະບໍລິຫານງານ ປະກອບດ້ວຍ ປະທານ ແລະ ຮອງປະທານຈຳນວນໜຶ່ງ ຊຶ່ງຖືກເລືອກຕັ້ງໂດຍ ກຳມະການຄະນະບໍລິຫານງານ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ.

### ມາດຕາ 6. ການຄຸ້ມຄອງ

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ຄຸ້ມຄອງ ສະພາການຄ້າ ແລະ ອຸດສາຫະກຳ ທ້ອງຖິ່ນ, ຕົວແທນ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ຢູ່ຕ່າງປະ ເທດ, ສະພາການຄ້າ ແລະ ອຸດສາຫະກຳ ຕ່າງປະເທດ ໃດໜຶ່ງ ກັບ ລາວ ແລະ ສະພາການຄ້າ ແລະ ອຸດສາຫະກຳຕ່າງປະເທດທີ່ໄດ້ຮັບ ອະນຸຍາດໃຫ້ເຄື່ອນໄຫວໃນ ສ ປ ປ ລາວ.

ສະພາການຄ້າ ແລະ ອຸດສາຫະກຳ ຂອງຕ່າງປະເທດ ແລະ ສະພາການຄ້າ ແລະ ອຸດສາຫະກຳ ຂອງຕ່າງປະເທດໃດໜຶ່ງ ກັບ ລາວ ຈະສ້າງຕັ້ງ ແລະ ເຄື່ອນໄຫວໃນ ສ ປ ປ ລາວໄດ້ ກໍຕໍ່ເມື່ອຫາກໄດ້ຮັບອະ ນຸຍາດຈາກ ກະຊວງການຕ່າງປະເທດ. ກະຊວງການຕ່າງປະເທດ ເປັນຜູ້ຄົ້ນຄວ້າ ວາງລະບຽບການ ກ່ຽວກັບ ການສ້າງຕັ້ງ ແລະ ການເຄື່ອນໄຫວ ຂອງສະພາການຄ້າ ແລະ ອຸດສາຫະກຳ ດັ່ງກ່າວ.

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ຕັ້ງຢູ່ບ່ອນໃດ, ຢູ່ບ່ອນນັ້ນບໍ່ຈຳເປັນຈະສ້າງຕັ້ງ ສະພາການຄ້າ ແລະ ອຸດສາຫະກຳທ້ອງຖິ່ນຂຶ້ນອີກ.

### ມາດຕາ 7. ຫລັກການພື້ນຖານ ຂອງການເຄື່ອນໄຫວ

ທຸກການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ລາວ ຕ້ອງປະຕິບັດຕາມກົດລະບຽບຂອງຕົນ, ດຳລັດສະບັບນີ້ ແລະ ລະບຽບກົດໝາຍອື່ນໆ.

ສະພາການຄ້າ ແລະ ອຸດສາຫະກຳທ້ອງຖິ່ນ ຈັດຕັ້ງ ແລະ ເຄື່ອນໄຫວວຽກງານ ໃນຂອບເຂດທ້ອງ ຖິ່ນຂອງຕົນພາຍໃຕ້ຫລັກການພື້ນຖານຂອງການຈັດຕັ້ງ ແລະ ເຄື່ອນໄຫວ ເຊັ່ນດຽວກັບສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ຕາມທີ່ໄດ້ບົ່ງໄວ້ໃນດຳລັດສະບັບນີ້ ເວັ້ນເສຍແຕ່ບັນດາ ສິດ ແລະ ໜ້າທີ່ ທີ່ມີ ລັກສະນະສະເພາະ ຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

## ໝວດທີ IV
## ລະບອບການເງິນ

### ມາດຕາ 8. ງົບປະມານ

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປັນອົງການຈັດຕັ້ງທີ່ມີຖານະເປັນນິຕິບຸກຄົນ, ມີງົບປະມານສະເພາະເປັນຂອງຕົນເອງ ແລະ ເຄື່ອນໄຫວຢ່າງເປັນເອກະລາດ ທາງດ້ານການເງິນ.

### ມາດຕາ 9. ແຫລ່ງລາຍຮັບ

ແຫລ່ງລາຍຮັບຕົ້ນຕໍ ຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ມີດັ່ງນີ້:

- ຄ່າທຳນຽມຂອງສະມາຊິກ;
- ຄ່າບໍລິການ ອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫລ່ງກຳເນີດສິນຄ້າ;
- ຄ່າບໍລິການຕ່າງໆ: ການຝຶກອົບຮົມ, ການສຳມະນາ, ການໃຫ້ຄຳປຶກສາ, ການສະໜອງຂໍ້ມູນ ແລະ ການຈັດງານວາງສະແດງສິນຄ້າ;
- ຄ່າບໍລິການ ການຄຸ້ມຄອງກິດຈະການຂອງລັດ ຕາມການຕົກລົງຂອງລັດຖະບານ ແລະ ອຳນາດ ການປົກຄອງທ້ອງຖິ່ນ;
- ການສະໜັບສະໜູນ ຂອງ ລັດ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 10. ການຈັດຕັ້ງປະຕິບັດ**

ມອບໃຫ້ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປັນຜູ້ຈັດຕັ້ງປະຕິບັດ ດຳລັດສະບັບນີ້.

ບັນດາຂະແໜງການ ແລະ ອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຈົ່ງໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກແກ່ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ໃນການເຄື່ອນໄຫວວຽກງານຂອງຕົນ.

**ມາດຕາ 11. ຕາປະທັບ**

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ແລະ ສະພາການຄ້າ ແລະ ອຸດສາ ຫະກຳທ້ອງຖິ່ນ ມີຕາປະທັບຂອງຕົນ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານ.

**ມາດຕາ 12. ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດ ສະບັບເລກທີ 175/ນຍ ລົງວັນທີ 20/8/98 ວ່າດ້ວຍຂອບເຂດຄວາມຮັບຜິດຊອບ ຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

ນາຍົກລັດຖະມົນຕີ,

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ບຸນຍັງ ວໍລະຈິດ